## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 21 ກັນຍາ 2008 (9-21-2008)

---

## <u>ບໍ່ມີເວລາໃດທີ່ເຫມືອນປະຈຸບັນນີ້</u>

**ຂໍ້ພຣະຄັມພີໃນບົດຮຽນ**: ມັດທາຍ 25:1-13

## ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ທ່ານຄວນຈະກ້າວໄປອີກຂັ້ນນຶ່ງເພື່ອໃຫ້ເຫັນວ່າທ່ານຕຽມຕົວທີ່ຈະພົບພຣະເຢຊູແລະຫມູນນ້ຳໃຈຄົນອື່ນໆ ໃຫ້ຕຽມຕົວເຊັ່ນກັນ.

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ພຣະເຢຊູກ່າວຄຳອຸປມາເຣື່ອງສາວປອດສິບຄົນທີ່ໄປງານດອງ. ຫ້າຄົນມີການຕຽມຕົວແລະອີກຫ້າຄົນບໍ່ໄດ້ຕຽມຕົວ. ກ່ຽວກັບເຣື່ອງນີ້, ພຣະເຢຊູເນັ້ນໃສ່ການຕຽມຕົວທຸກໆເວລາສຳລັບການກັບມາຂອງພຣະອົງ.

## ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

"ເວລາມັນຫາຍໄປເປັນອະນາຄົດອີກແລ້ວ" "ຖ້າຂ້ອຍຫາກສາມາດທ້ອນເວລາໃສ່ໃນແກ້ວໄວ້ໄດ້" "ເວລາມັນຜ່ານໄປຢ່າງວ່ອງໄວ" "ເວລາມັນສູນຫາຍເປົ່າໆ." ສມັຍຂອງພວກເຮົາ ຄືກັນກັບພວກລຸ້ນກ່ອນ ພວກເຮົາສຳນຶກໄດ້ຢ່າງເຈັບປວດທີ່ເດີນຕາມເວລາ. ເຖິງປານນັ້ນ, ບໍ່ຮູ້ວ່າດ້ວຍເຫດໃດຄົນຍັງຄິດວ່າພວກເຂົາຍັງມີເວລາຢູ່ສເມີທີ່ຈະເຮັດໃນສິ່ງທີ່ຖືກຕ້ອງຕໍ່ພຣະເຈົ້າ. ແຕ່ກໍຫນ້າເສັຍໃຈ, ຫລາຍຄົນຈະພົບວ່າມັນສວາຍເກີນໄປທີ່ພວກເຂົາລໍຖ້າເຫິງນານເກີນໄປແລະກໍຫມົດເວລາເສັຍແລ້ວ.

ບ໊ອບຕໍ່ຕ້ານການສົນທະນາກ່ຽວກັບເຣື່ອງຂອງພຣະຜູ້ເປັນເຈົ້າສເມີ. ເມື່ອສິດຍາພິບານມາຢ້ຽມທີ່ບ້ານລາວຈະລົມນຳສອງສາມຄວາມແລ້ວກໍລັກຫນີໄປ. ຕໍ່ຈາກນັ້ນເມັຽຂອງບ໊ອບ, ທີ່ເປັນຜູ້ເຊື່ອທີ່ສັດຊື່, ກໍພົບວ່າລາວມີພະຍາດທີ່ຮ້າຍແຮງໃນຊີວິດ. ດັ່ງນັ້ນສິດຍາພິບານກໍທຽວມາເຮືອນຂອງບ໊ອບເກືອບທຸກອາທິດ. ຄົນອື່ນໆໃນໂບດກໍໄດ້ເປັນພະຍານໃຫ້ແກ່ຄອບຄົວຂອງບ໊ອບ. ຄອບຄົວຂອງລາວກໍເລີ້ມມາໂບດແລະຫລານສາວຂອງລາວສອງຄົນກໍໄດ້ຮັບຄວາມພົ້ນບາບແລະຮັບບັບຕິສະມາ.

ເມື່ອເມັຽຂອງບ໊ອບເສັຽຊີວິດ, ລາວຕັດສິນໃຈເລີ້ມຕົ້ນໄປໂບດ. ສິດຍາພິບານກໍໄປທີ່ເຮືອນຂອງລາວແລະແບ່ງປັນກ່ຽວກັບເຣື່ອງການກາຍເປັນຜູ້ເຊື່ອຖືໃນພຣະເຢຊູ. ຄົນອື່ນໆກໍເວົ້າກ່ຽວກັບເຣື່ອງຄວາມລອດພົ້ນບາບກັບລາວ. ຕອນທຳອິດ, ບ໊ອບກໍຕໍ່ຕ້ານ, ແຕ່ວ່າໃນວັນອາທິດນຶ່ງ, ລາວໄດ້ຍ່າງອອກໄປມອບຊີວິດຂອງລາວໃຫ້ແກ່ພຣະເຢຊູຢູ່ທີ່ໂບດ. ຫລັງຈາກນັ້ນມາປະມານສອງຫລືສາມອາທິດ, ບ໊ອບກໍພົບວ່າພະຍາດຮ້າຍແຮງກຳເລີບໃນຊີວິດ. ລາວໄດ້ໃຊ້ມື້ສຸດທ້າຍຂອງຊີວິດສັຣເສີນພຣະເຈົ້າສຳລັບຄວາມລອດພົ້ນບາບຂອງລາວ ແລະດີໃຈທີ່ສຸດທີ່ລາວໄດ້ຕຽມຕົວພ້ອມແລ້ວ-ຕຽມພ້ອມທີ່ຈະຕາຍແລະຕຽມພ້ອມທີ່ຈະຢູ່ກັບພຣະເຢຊູຕລອດໄປເປັນນິດ.

ມີຫລາຍໆຄົນທີ່ຍັງບໍ່ທັນຕຽມພ້ອມ. ພວກເຂົາເມີນເສີຍຕໍ່ຄວາມລອດພົ້ນບາບໃນຊີວິດນີ້, ມີແຕ່ຈະເສັຽຊີວິດນັ້ນຢ່າງກະທັນຫັນເທົ່ານັ້ນ-ອາດຈະເກີດຈາກຣົດຕຳກັນ, ຫົວໃຈວາຍຢ່າງກະທັນຫັນ, ຫລືຖືກລູກປືນ. ພວກເຂົາບໍ່ລໍ່າໄລຕໍ່ການກັບມາຄັ້ງທີສອງຂອງພຣະເຢຊູຄືກັນ. ໃນບົດຮຽນສຳລັບອາທິດນີ້, ພວກເຮົາຈະສຳຣວດເຖິງຄວາມສຳຄັນ

ຂອງການຕຽມພ້ອມທີ່ຈະພົບກັບພຣະເຢຊູ, ບໍ່ວ່າຈະເປັນການຕາຍຂອງພວກເຮົາເອງຫລືການກັບມາຂອງພຣະອົງ. ບົດຮຽນນີ້ຍັງຊ່ວຍຫນູນນ້ຳໃຈພວກທີ່ເຊື່ອໃຫ້ສັດຊື່ໃນການເປັນພະຍານຂອງພວກເຂົາ ເພື່ອຜູ້ອື່ນໆຈະໄດ້ຕຽມພ້ອມເຊັ່ນກັນ.

## ສຶກສາພຣະຄັມພີ

### 1. **ຍັງມີເວລາສເມີ** (ມັດທາຍ 25:1-5)

ໃນການຕອບຄຳຖາມຂອງພວກສາວົກກ່ຽວກັບເລື່ອງທີ່ຈະເກີດຂຶ້ນໃນອະນາຄົດ(ມທ 24:3), ພຣະເຢຊູຕອບດ້ວຍຄຳເຕືອນເປັນຄຳອຸປມາກ່ຽວກັບເຫດການຫລາຍຢ່າງທີ່ຈະເກີດຂຶ້ນໃນຄາວສຸດທ້າຍຂອງອານາຈັກ- ເປັນພິເສດແມ່ນການກັບມາຂອງພຣະອົງ. ຄຳອຸປມາເລື່ອງນີ້ພຣະເຢຊູເວົ້າກ່ຽວກັບສາວປອດສິບຄົນທີ່ລໍຖ້າເຈົ້າບ່າວເພື່ອຮ່ວມພິທີສົມຣົດໃນຕອນກາງຄືນ. ເບິ່ງແບບເຜີນໆ, ພວກເຂົາບໍ່ໄດ້ຕ່າງຫຍັງກັນ. ພວກເຂົາທັງຫມົດເປັນເພື່ອນເຈົ້າສາວທີ່ຍັງຫນຸ່ມແຫນ້ນ, ພວກເຂົາມີໂຄມກັບນ້ຳມັນ, ພວກເຂົາທັງຫມົດ**ກໍເຫງົານອນແລະຫລັບໄປ**, ແລະພວກເຂົາທັງຫມົດກໍຕ້ອງການມີສ່ວນຮ່ວມໃນງານລ້ຽງເມື່ອເຖິງເວລາ. ສິ່ງທີ່ແຕກຕ່າງລະຫວ່າງສາວປອດຫ້າຄົນທີ່ຖືກຮ້ອງວ່າ**ໂງ່**ແລະອີກຫ້າຄົນຖືກຮ້ອງວ່າ**ສລາດ**ກໍຄືພວກເຂົາຖືນ້ຳມັນມາເພີ້ມເທົ່ານັ້ນທີ່ຫ້າຄົນຖືມາພ້ອມໃນກໍຣະນີເຈົ້າບ່າວຊັກຊ້າ. ອີກຫ້າຄົນບໍ່ໄດ້ຕຽມພ້ອມຕໍ່ການຊັກຊ້າແລະກໍບໍ່ໄດ້ຖືນ້ຳມັນມາເພີ້ມສຳລັບໂຄມຂອງພວກເຂົາ.

ການແຕ່ງງານໃນສມັຍຂອງພຣະເຢຊູເຮັດໄປເປັນຂັ້ນຕອນ. ບາງຄັ້ງການຈັບຈອງຄູ່ເພື່ອການແຕ່ງງານແມ່ນຫລັງຈາກພວກເດັກນ້ອຍເກີດມາໄດ້ຫນ້ອຍນຶ່ງແລ້ວ. ການຈັບຈອງແບບນີ້ແມ່ນຕິດຕາມດ້ວຍການຫມັ້ນຊຶ່ງທັງຄູ່ຈະແລກປ່ຽນຄຳຫມັ້ນສັນຍາແລະຂອງຂວັນຕ່າງໆ. ທັງສອງຖືວ່າແຕ່ງງານຖືກຕ້ອງຕາມກົດຫມາຍແລະຖ້າມີການແຍກຈາກກັນກໍຖືວ່າຢ່າຮ້າງກັນ. ການແຕ່ງງານຈະບໍ່ສຳເຣັດບໍຣິບູນຈົນກວ່າຈະຈົບຂັ້ນສຸດທ້າຍ, ຊຶ່ງຈະເກີດຂຶ້ນນານສົມຄວນຫລັງຈາກນັ້ນ, ຕາມປົກກະຕິແລ້ວເມື່ອທັງສອງເຖິງຂັ້ນຊອນບ່າວຊອນສາວແລ້ວ. ຂນະການກິນລ້ຽງສລອງໃນຂັ້ນສຸດທ້າຍ, ເຈົ້າບ່າວຈະຍ່າງເຂົ້າພິທີທີ່ບ້ານຂອງເຈົ້າສາວຊຶ່ງເຕັມດ້ວຍແຜນການທີ່ຕັ້ງໃຈຈະໃຫ້ຂັ້ນຕອນຊັກຊ້າລົງ. ຫລັງຈາກນັ້ນຄະນະເຈົ້າສາວຈະຍ່າງໄປບ້ານພໍ່ຂອງເຈົ້າບ່າວເພື່ອມ່ວນຊື່ນໃນງານລ້ຽງແລະສເລີມສລອງ.ໃນພິທີການແບບນີ້, ຄົນທັງຫລາຍກໍເຂົ້າຮ່ວມກັບເຂົາທັງສອງ.

ໃນການອະທິບາຍເຖິງຣາຊອານາຈັກສວັນໂດຍການໃຊ້ຄຳອຸປມາເລື່ອງສາວປອດສິບຄົນ, ພຣະເຢຊູກຳລັງເນັ້ນໃສ່ການທີ່ຈະຕ້ອງຕຽມພ້ອມໃນການກັບມາຂອງພຣະອົງຢູ່ທຸກເວລາ. ຄົນສ່ວນຫລາຍປາຖນາຢາກມີສ່ວນໃນແຜ່ນດິນສວັນ, ແຕ່ວ່າມີພຽງຫນ້ອຍຄົນເທົ່ານັ້ນທີ່ຈັດຕຽມພວກເຂົາເອງສຳລັບການນັ້ນ. ໃນຫລາຍໆກໍຣະນີພວກທີ່ເຊື່ອແລະພວກທີ່ບໍ່ເຊື່ອປາກົດວ່າມີຫລາຍຢ່າງຄືກັນ. ພວກເຂົາໃຊ້ເວລານຳກັນແລະເຂົ້າຮ່ວມກິຈການຫລາຍຢ່າງນຳກັນ, ລວມທັງການເຂົ້າຮ່ວມລາຍການໃນໂບດຮ່ວມກັນ. ພວກເຂົາກໍເປີດເຜີຍຄວາມປາຖນາຂອງພວກເຂົ້າທີ່ຢາກໄປສວັນ. ຄວາມແຕກຕ່າງອັນແທ້ຈິງລະຫວ່າງສອງພວກນີ້ອາດຈະເປັນເພາະພວກທີ່ເຊື່ອຕຽມຕົວພ້ອມແລ້ວຕໍ່ການກັບມາຂອງພຣະເຢຊູ-ພວກເຂົາໄດ້ຮັບຄວາມພົ້ນແລ້ວ -ໃນຂນະດຽວກັນພວກທີ່ບໍ່ເຊື່ອຍັງບໍ່ໄດ້ຮັບເອົາຄວາມລອດພົ້ນບາບ.

ອັຄສາວົກເປໂຕກໍໄດ້ເຕືອນພວກທີ່ເຊື່ອ ກ່ຽວກັບການຕຽມຕົວໃຫ້ພ້ອມຂນະທີ່ຄົນອື່ນໆຍັງບໍ່ຕຽມຕົວໃນຕອນທີ່ລໍຖ້າການສະເດັດມາຂອງພຣະຄຣິດ (2 ເປໂຕ 3:3-10). ອັຄສາວົກໂປໂລເນັ້ນໃຫ້ພວກທີ່ເຊື່ອຕ້ອງຢູ່ໃນຂັ້ນຕຽມຕົວຢູ່ທຸກເວລາເຖິງແມ່ນວ່າຄົນອື່ນໆຍັງເມີນເສີຍບໍ່ຕຽມຕົວ (1 ເທຊະໂລນິກ 5:1-11).

ພວກເຮົາກໍບໍ່ຮູ້ແນ່ວ່າໂມງໃດທີ່ພຣະເຢຊູຈະສະເດັດກັບມາ, ພວກເຮົາອາດຈະພົບພຣະອົງໃນການຕາຍຂອງ

ພວກເຮົາ, ຫລືຕິງກັບເວລາຂອງເຫດການສຸດທ້າຍຄືໂລກຈະສລາຍໄປ, ແຕ່ວ່າພວກເຮົາຕ້ອງຕຽມຕົວໃຫ້ພ້ອມຕໍ່ການນັ້ນຢູ່ທຸກເວລາ. ພວກເຮົາອາດຄິດໄປວ່າພວກເຮົາຍັງມີສຸຂພາບແຂງແຮງດີຢູ່, ຫລືການກັບມາຂອງພຣະຄຣິດຍັງບໍ່ເກີດຂຶ້ນເທື່ອຫລັງຈາກ 2000 ປີຜ່ານມາແລ້ວ, ແລ້ວກໍຈະໃຊ້ເວລາຕາມໃຈຊອບໃນທາງຂອງພວກເຮົາເອງ. ແຕ່ວ່າເປົ້າໝາຍຂອງຄໍາອຸປມານີ້ກໍບົ່ງແຈ້ງແລ້ວ-ພວກເຮົາບໍ່ຮູ້ວ່າວ່າເວລາມັນເຫລືອຫລາຍຊໍ່າໃດພວກເຮົາກໍຈະຖືກຈັດເຂົ້າໃນພວກຄົນໂງ່ຖ້າວ່າພວກເຮົາຫາກບໍ່ຕຽມຕົວພົບກັບພຣະອົງ.

## 2. <u>**ເວລາຫມົດແລ້ວ**</u> (ມັດທາຍ 25:6-9)

ເຈົ້າບ່າວມາເຖິງແລ້ວພ້ອມກັບສຽງຮ້ອງອັນດັງ, ພວກສາວປອດຖືກເອີ້ນໃຫ້ໄປພົບລາວ. ທ່ານໂປໂລໄດ້ບອກວ່າພວກຊາວເທຊະໂລນິກເຖິງການສະເດັດມາຂອງພຣະຜູ້ເປັນເຈົ້າກໍຈະມີສຽງຮ້ອງອັນດັງ (1 ເທຊະໂລນິກ 4:16). ພວກສາວປອດ**ໂງ່**ນັ້ນຮູ້ວ່າໂຄມຂອງພວກເຂົາຈະມອດແລະພວກເຂົາຕ້ອງການນໍ້າມັນຕື່ມອີກ. ພວກເຂົາພະຍາຍາມຂໍນໍ້າມັນຈາກພວກສາວປອດທີ່**ສລາດ**ແຕ່ກໍຖືກປະຕິເສດ.

ພວກເພື່ອນເຈົ້າສາວທີ່ສລາດພວກນີ້ມີນໍ້າມັນພຽງພໍແຕ່ກະຕຽງຫ້າອັນເທົ່ານັ້ນແລະບໍ່ມີພໍເພື່ອທັງສິບອັນ. ຄໍາຕອບຂອງພວກເຂົາບໍ່ໄດ້ກ່ຽວກັບຄວາມຂີ້ຖີ່ແຕ່ເພາະວ່າພວກເຂົາມີແຕ່ກຸ້ມສະເພາະຂອງພວກເຂົາເອງເທົ່ານັ້ນ. ພວກສາວປອດທີ່ຕຽມຕົວນັ້ນກໍບໍ່ສາມາດຊ່ວຍພວກທີ່ໂງ່ໃນສິ່ງທີ່ພວກເຂົາມີ, ແຕ່ວ່າເຂົາກໍມີເຈດຕະນາທີ່ຢາກຊ່ວຍ. ພວກເຂົາໄດ້ບອກສາວປອດພວກໂງ່ວ່າໃຫ້**ໄປ...ຫາພວກທີ່ຂາຍນໍ້າມັນ, ແລະຂໍຊື້ນໍາເຂົາ**. ພາກສ່ວນນ້ອຍນີ້ໃນຄໍາອຸປມາຊີ້ບອກແຈ້ງໃຫ້ເຫັນວ່າບໍ່ມີຜູ້ໃດສາມາດຕຽມຝ່າຍຈິດວິນຍານໃຫ້ແກ່ຄົນອື່ນໄດ້.

ຄືກັບພວກສາວປອດໂງ່ນັ້ນ, ຫລາຍໆຄົນໃນສມັຍນີ້ກໍບໍ່ຕຽມພ້ອມທີ່ຈະຍິນພຣະເຈົ້າຕັດກ່າວວ່າ,"ເວລາຫມົດແລ້ວ." ເວລາອາດຈະຫມົດສໍາລັບພວກເຂົາກັບການສະເດັດກັບມາຂອງພຣະຄຣິດ, ຫລືໂດຍຄວາມບໍ່ຄາດຄິດເຖິງການຈົບສິ້ນຊີວິດຂອງພວກເຂົາ. ມັນອາດຈະຈົບສິ້ນໃນການສູນເສັຽຄວາມສາມາດໃນການເລືອກຂອງພວກເຂົາເນື່ອງຈາກໂຣກອໍາມະພາດຫລືອຸບັດຕິເຫດທໍາລາຍສມອງຂອງພວກເຂົາ, ຈຶ່ງເຮັດໃຫ້ພວກເຂົາຫມົດໂອກາດໃນການຕຽມຕົວສໍາລັບຊີວິດອັນຕລອດໄປເປັນນິດ. ສໍາລັບທຸກໆຄົນ, ການພົບກັບພຣະເຢຊູສາມາດເກີດຂຶ້ນໄດ້ທຸກເວລາແລະຈະບໍ່ມີໂອກາດຕຽມຕົວອີກແລ້ວ. ຄໍາອຸປມານີ້ສອນພວກເຮົາວ່າເມື່ອເຮົາພົບພຣະເຢຊູ, ພວກເຮົາບໍ່ສາມາດກັ້ງຕໍ່ການຕຽມຕົວຂອງຜູ້ອື່ນຫລືການຕຽມຕົວຂອງພວກເຮົາເພື່ອໃຫ້ກົງກັບຄວາມຕ້ອງການຂອງຜູ້ອື່ນ.

## <u>**3. ເວລາທີ່ບໍ່ຮູ້ຈັກ**</u> (ມັດທາຍ 25:10-13)

ພວກສາວປອດ**ໂງ່**ຫ້າຄົນທີ່ເຫລືອຢູ່ຕ້ອງໄປຊື້ນໍ້າມັນທີ່ພວກເຂົາຕ້ອງການ. ຂນະທີ່ພວກເຂົາເດີນທາງໄປ, ເຈົ້າບ່າວກໍມາເຖິງແລະ**ພວກທີ່ຕຽມຕົວພ້ອມຢູ່ແລ້ວ**ກໍໄດ້ເຂົ້າໄປໃນງານລ້ຽງ. ປະຕູກໍຖືກອັດໄວ້. ເມື່ອພວກໂງ່ຫ້າຄົນມາເຖິງແລະພົບວ່າປະຕູຖືກອັດໄວ້ແລ້ວ, ພວກເຂົາກໍພະຍາຍາມຢາກເຂົ້າໄປໂດຍເວົ້າວ່າ, **"ນາຍເອີຍ, ນາຍເອີຍ ໄຂປະຕູໃຫ້ຫມູ່ຂ້ານ້ອຍແດ່!"** ແຕ່ເພິ່ນໄດ້ຕອບວ່າ, **"ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ເຮົາບໍ່ຮູ້ຈັກພວກທ່ານ!"**

ພວກສາວປອດໂງ່ບໍ່ພຽງແຕ່ສາມາດໄຂປະຕູເຂົ້າໄປເທົ່ານັ້ນ, ແຕ່ວ່າເຈົ້ານາຍບອກວ່າເພິ່ນບໍ່ຮູ້ຈັກພວກເຂົາ. ມີແຕ່ພວກທີ່ມີສາຍສໍາພັນສ່ວນຕົວກັບພຣະເຢຊູຄຣິດຍອມໃຫ້ພຣະອົງເປັນພຣະເຈົ້າແລະຜູ້ໄຖ່ໃຫ້ລອດພົ້ນບາບສ່ວນຕົວເທົ່ານັ້ນຈຶ່ງຖືວ່າເປັນຜູ້ຕຽມຕົວທີ່ແທ້ຈິງໃນການພົບກັບພຣະເຢຊູ. ໃນສມັຍຂອງໂນອາ, ພຣະຜູ້ເປັນເຈົ້າໄດ້ໃຫ້ໂອກາດແກ່ພວກມະນຸດໃຫ້ຕຽມຕົວໂດຍຜ່ານການຖິ້ມໃຈເກົ່າເອົາໃຈໃຫມ່ແລະຄວາມລອດພົ້ນບບາບ, ແຕ່ວ່າພຣະເຈົ້າເອງເປັນຜູ້ອັດປະຕູ (ປະຖົມມະການ 7:16). ພຣະຜູ້ເປັນເຈົ້າໄດ້ໃຫ້ໂອກາດກັບມະນຸດສມັຍນີ້ໂດຍຜ່ານການຖິ້ມໃຈເກົ່າຮັບເອົາໃຈໃຫມ່ແລະຄວາມລອດພົ້ນບາບ, ແຕ່ວ່າເວລາແຫ່ງການພິພາກສາຍັງບໍ່ຮູ້ຈັກເທື່ອ. ມື້ນຶ່ງ, ພຣະເຈົ້າຈະອັດປະຕູແຫ່ງຄວາມລອດພົ້ນ. ສໍາລັບມະນຸດທຸກໆຄົນ, ມັນຈະມີເວລານຶ່ງເມື່ອການຕຽມຕົວພົບກັບພຣະເຢຊູຈະບໍ່ມີ

ອີກແລ້ວ.

ຍັງຈະມີຫລາຍໆຄົນທີ່ຢາກໄປສວັນ, ແຕ່ວ່າພວກເຂົາຈະບໍ່ໄດ້ເຂົ້າໄປເພາະວ່າພວກເຂົາບໍ່ໄດ້ຕຽມຕົວຂນະທີ່ຍັງມີເວລາຢູ່. ບາງຄົນໃນພວກເຂົາກໍຢູ່ໃນໂບດ, ເຮັດຄວາມດີ, ແລະເບິ່ງເປືອກນອກຄືວ່າເປັນຄົນທີ່ໄດ້ຕຽມຕົວ. ພວກເຂົາເບິ່ງຄືກັບພວກທີ່ຕຽມພ້ອມຢູ່ແລ້ວ, ແຕ່ວ່າພວກເຂົາບໍ່ແມ່ນ. ພວກເຂົາບໍ່ຮູ້ຈັກພຣະເຢຊູແລະພຣະອົງກໍບໍ່ຮູ້ຈັກພວກເຂົາ-ບໍ່ໄດ້ຣິດຊາດຂອງຄວາມລອດພົ້ນບາບ(ມັດທາຍ 7:21-23).

ພຣະເຢຊູໄດ້ເຕືອນພວກເຮົາໃຫ້ລະວັງ, ເພາະວ່າພວກເຮົາບໍ່ຮູ້ວັນຫລືໂມງນັ້ນ. ນີ້ບໍ່ພຽງແຕ່ເປັນຈິງກ່ຽວກັບການສະເດັດກັບມາຂອງພຣະຄຣິດເທົ່ານັ້ນ, ແຕ່ວ່າກ່ຽວກັບຊີວິດຂອງພວກເຮົາດ້ວຍ. ພວກເຮົາບໍ່ຮູ້ຈັກວ່າຊີວິດຂອງພວກເຮົາຈະເປັນຢ່າງໃດໃນນຶ່ງຊົ່ວໂມງຂ້າງຫນ້າ, ຫລືມື້ຕໍ່ໄປ. ພວກເຮົາຕ້ອງຕຽມພ້ອມໃນການພົບກັບພຣະເຢຊູດຽວນີ້. ມື້ນຶ່ງຂ້າງຫນ້າປະຕູແຫ່ງໂອກາດກໍຈະອັດໄວ້, ແລະບໍ່ມີຜູ້ໃດ, ເຖິງແມ່ນວ່າພຣະຜູ້ເປັນເຈົ້າ, ກໍຈະບໍ່ໄຂປະຕູນັ້ນອີກ.

## ບົດຮຽນຊີວິດ

- ຢ່າເຮັດທຳທ່າຄືຫລືສະແດງຕົວຄືຜູ້ມີຄວາມເຊື່ອວ່າຕຽມພ້ອມແລ້ວທີ່ຈະພົບກັບພຣະເຢຊູ.
- ໃຫ້ສຳນຶກວ່າເວລາສຸດທ້າຍຈະມາເຖິງເມື່ອໂອກາດຂອງການຕຽມຕົວຈະຫມົດລົງ.
- ໃຫ້ແນ່ນອນວ່າທ່ານຫັນຫນີຈາກຄວາມຜິດບາບແລະວາງໃຈເຊື່ອພຣະເຢຊູໃຫ້ເປັນພຣະເຈົ້າແລະພຣະຜູ້ຊ່ວຍໃຫ້ພົ້ນສ່ວນຕົວ, ໃຫ້ເຊື່ອວ່າພຣະອົງເປັນພຣະບຸດຂອງພຣະເຈົ້າ, ພຣະອົງຕາຍທີ່ໄມ້ກາງແຂນເພື່ອຄວາມຜິດບາບຂອງທ່ານ, ພຣະອົງຖືກຝັງໄວ້, ພຣະອົງຟື້ນຄືນມາຈາກຄວາມຕາຍ, ແລະພຣະອົງຈະສະເດັດມາອີກ.
- ນຳພາຄົນອື່ນໆໃຫ້ຕຽມຕົວໂດຍການວາງໃຈເຊື່ອພຣະຄຣິດໃນການຍົກບາບໂທດແລະຄວາມພົ້ນ.
- ດຳຣົງຊີວິດໃນແຕ່ລະມື້ເຫມືອນດັ່ງຈະໄດ້ພົບພຣະເຢຊູໃນມື້ນັ້ນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA